ສະມາຄົມສົ່ງເສີມສຸຂະພາບຄອບຄົວ, ລາວ
ເຮືອນເລກທີ 499 ໜ່ວຍ 36, ບ້ານໂພນເຄັງ,
ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ
Tel: 856 21 413261 Fax 021 414918

# ປະກາດຮັບສະໝັກທີ່ປຶກສາການນຳໃຊ້ສື່ທາງສັງຄົມອອນລາຍ

ສະມາຄົມສົ່ງເສີມສຸຂະພາບຄອບຄົວ (ສສສຄ) ເປັນອົງກອນນຳໜ້າໃນດ້ານສຸຂະພາບຄອບຄົວ ແນໃສ່ເຮັດໃຫ້ປະຊາຊົນລາວໄດ້ຮັບຂໍ້ມູນຂ່າວສານທີ່ຖືກຕ້ອງ, ທັນສະໄໝດ້ວຍວິທີສ້າງສັນ ແລະ ການບໍລິການທີ່ມີຄຸນນະພາບດ້ານສຸຂະພາບຈະເລີນພັນ ໂດຍ ສົ່ງເສີມບຸກຄົນ ຜ່ານ ການໃຫ້ຄວາມຮູ້, ການປູກຈິດສຳນຶກ ແລະ ການບໍລິການ ລວມທັງ ປັບປຸງຄຸນນະພາບການບໍລິການ ໃຫ້ກັບກຸ່ມເປົ້າໝາຍ ດ້ວຍການຮ່ວມມື ກັບ ພາກລັດຖະບານ, ພາກສ່ວນກ່ຽວຂ້ອງຕ່າງໆ ແລະ ອົງການຈັດຕັ້ງທາງສັງຄົມອື່ນໆ

ປະຈຸບັນ, ສສສຄ ໄດ້ຮັບການຊ່ວຍເຫຼືອລ້າຈາກ ສະຫະພັນວາງແຜນຄອບຄົວສາກົນ (IPPF) ເພື່ອຈັດຕັ້ງປະຕິບັດໂຄງການ ຕອບສະໜອງ Responding with Essential SRHR Provision and New Delivery Mechanisms (RESPOND)" ແລະ ສສສຄ ກຳລັງຊອກຫາບຸກຄົນ/ນິຕິບຸກຄົນ ທີ່ມີ ແຮງຈູງໃຈ, ມີຄວາມຄິດສ້າງສັນ ແລະ ປະສົບການ ໃນການໃນການເປັນຄູຝຶກ ມາເຮັດວຽກໃຫ້ໂຄງການ. ຜູ້ນີ້ຈະເຮັດວຽກກັບພະນັກງານໂຄງການກ່ຽວກັບການຝຶກອົບຮົມກ່ຽວກັບ ການນຳໃຊ້ສື່ໂຊສະນາ Tiktok ເຂົ້າໃນການເຜີຍແຜ່ວຽກງານ ການວາງແຜນຄອບຄົວໃຫ້ແກ່ ພະນັກງານບໍລິການ ດ້ານສຸຂະພາບ (ນັບແຕ່ 7-8 ພະຈິກ 2024) ທີ່ຫ້ອງປະຊຸມ ພະແນກສາທາລະນະສຸກ ແຂວງຫຼວງນ້ຳທາ ສຳລັບຕຳແໜ່ງຕໍ່ໄປນີ້:

**ທີ່ປຶກສາການນຳໃຊ້ສື່ທາງສັງຄົມອອນລາຍ (Social Media Consultant )** ຈະປະຕິບັດວຽກງານດັ່ງຕໍ່ໄປນີ້:

***1. ຄວາມຮັບຜິດຊອບຫຼັກ:***

1) ກະກຽມ ຫຼັກສູດໃນການຝຶກອົບຮົມທາງດ້ານທິດສະດີ ເທັກນິກການນຳໃຊ້ສື່ອອນລາຍ, ຄອນເທັນ ແລະ ກໍລະນີການສຶກສາກ່ຽວກັບສື່ອອນລາຍ. ການປະຕິບັດຕົວຈິງກ່ຽວກັບການສ້າງ Content ຜ່ານສື່ອອນລາຍ
2) ກະກຽມ ບົດຮຽນທິດສະດີຖ່າຍພາບ, ຖ່າຍວິດີໂອດ້ວຍມືຖື, ແຕ່ງພາບ ແລະ ຕັດຕໍ່ວິດີໂອ(ຜ່ານໂທລະສັບ).
3) ນຳພາເຮັດການປະຕິບັດຕົວຈິງ ການຖ່າຍພາບ, ຖ່າຍວິດີໂອດ້ວຍມືຖື, ແຕ່ງພາບ ແລະ ຕັດຕໍ່ວິດີໂອ ດ້ວຍ App Mobile Canva, CapCut
4) ກະກຽມບົດຮຽນກ່ຽວກັບ ເທັກນິກການສ້າງເພຈ໌ ຕິກຕ໋ອກ Tiktok ແລະ Page Book ແລະ ການອັບໂຫລດຄອນເທັນ ລົງໃນຕິກຕ໋ອກ.
5) ຈັດຕັ້ງປະຕິບັດການຝຶກອົບຮົມຫຼັກສູດໃຫ້ກັບພະນັກງານບໍລິການດ້ານສຸຂະພາບຕາມເວລາທີ່ໄດ້ກຳນົດ
6) ໂຄສຊົງພະນັກງານບໍລິການດ້ານສຸຂະພາບທີ່ໄດ້ຮັບການຝຶກອົບຮົມ ໂດຍໃຫ້ເຂົາເຈົ້າສາມາດ ສ້າງຄອນເທັນ, ຕັດຕໍ່ວິດີໂອ ແລະ ສາມາດອັບໂຫຼດຄລິບ ໄດ້ດ້ວຍຕົນເອງ.

*ສະມາຄົມສົ່ງເສີມສຸຂະພາບຄອບຄົວ, ລາວ*
*ເຮືອນເລກທີ 499 ໜ່ວຍ 36, ບ້ານໂພນເຄັງ,*
*ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ*
*Tel: 856 21 413261 Fax 021 414918*

## 2. ເງື່ອນໄຂການຄັດເລືອກ

1) ເປັນບຸກຄົນ ຫລື ນິຕິບຸກຄົນ ທີ່ສາມາດເປັນຄູຝຶກ, ສາມາດຈັດຕັ້ງປະຕິບັດການຝຶກອົບຮົມໄດ້ຢູ່ຕ່າງແຂວງ ເຊັ່ນ: ແຂວງ ຫຼວງນ້ຳທາ.
2) ມີປະສົບການໃນການຜະລິດສື່, ການຄຸ້ມຄອງສື່ທາງສັງຄົມອອນລາຍ ແລະ ການຝຶກອົບຮົມ.
3) ມີຄວາມຮູ້ກ່ຽວກັບສື່ທາງສັງຄົມຕ່າງໆ ແລະ ເຄື່ອງມືການວິເຄາະ.
4) ມີທັກສະການສື່ສານ ແລະ ການນຳສະເໜີທີ່ດີເລີດ.
5) ມີປະສົບການເຮັດວຽກກັບອົງການຈັດຕັ້ງ ຫຼືທີມງານທີ່ຫຼາກຫຼາຍ.

ຄ່າບໍລິການຄູຝຶກ ແມ່ນສາມາດຕໍ່ລອງໄດ້ ຕາມຄຸນສົມບັດ ແລະ ປະສົບການ. ຕຳແໜ່ງຂ້າງເທິງນີ້ໄດ້ຮັບການສະເໜີໃນເບື້ອງຕົ້ນ ສຳລັບສັນຍາໄລຍະສັ້ນ, ຂຶ້ນກັບການທົບທວນຄືນ ແລະ ການມີເງິນທຶນ.

ຜູ້ສະໝັກຕ້ອງສົ່ງ resume or CV , ແລະ cover letter ກ່ອນວັນທີ 05 ພະຈິກ 2024

*ສະມາຄົມສົ່ງເສີມສຸຂະພາບຄອບຄົວ ສປປລາວ*
*ເຮືອນເລກທີ່. 449, ໜ່ວຍ 36, ບ້ານໂພນເຄັງ,*
*ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປລາວ*
*ໂທ: 85621 413261, ແຟັກ: 85621 414918*
*ອີເມວ: pfha@outlook.com*

ສສສຄ ມຸ່ງຫມັ້ນທີ່ຈະສ້າງໂອກາດເທົ່າທຽມກັນ ແລະ ຄວາມຫຼາກຫຼາຍທາງດ້ານວັດທະນະທຳ ແລະ ຜູ້ສະຫມັກຈາກທຸກພາກສ່ວນ ຂອງ ຊຸມຊົນແມ່ນຍິນດີຕ້ອນຮັບສະຫມັກ. ກະລຸນາຮັບຊາບວ່າ ສສສຄ ມີນະໂຍບາຍການປົກປ້ອງເດັກ, ໄວໜຸ່ມ ແລະ ຜູ້ໃຫຍ່ທີ່ມີຄວາມສ່ຽງ ແລະ ທ່ານຈະຕ້ອງປະຕິບັດຕາມ ນະໂຍບາຍນີ້ຖ້າຖືກຮັບສະໝັກ.

ທ່ານສາມາດສອບຖາມລາຍລະອຽດວຽກກ່ຽວກັບຂໍ້ກຳນົດໜ້າວຽກ (TOR) ຜ່ານການຂໍທາງອີເມວ:

pfha@outlook.com